# ບົດຮຽນ 12 - ພິທີຕັດ

ມັນເປັນສິ່ງສຳຄັນຫຼາຍທີ່ພວກເຮົາເນັ້ນໃສ່ສິ່ງເຫຼົ່ານັ້ນທີ່ໄດ້ຮັບການເນັ້ນໜັກຢູ່ໃນພຣະຄຳຂອງພຣະເຈົ້າແລະຢ່າເຮັດສິ່ງໃດສິ່ງໜຶ່ງຫຼາຍເກີນໄປ ຊຶ່ງບໍ່ສຳຄັນຢູ່ໃນພຣະຄຳຂອງພຣະເຈົ້າ. ເຖິງຢ່າງໃດກໍຕາມ , ໂບດບາງແຫ່ງມັກຍົກເອົາສິ່ງທີ່ພຣະຄຳພີບໍ່ໄດ້ຖືສຳຄັນ (ຫຼືບໍ່ໄດ້ເວົ້າເຖິງເລີຍ) ຂຶ້ນມາເປັນປະເດັນຕະຫຼອດ. ໃນອີກດ້ານໜຶ່ງ, ພວກເຂົາອາດຈະບໍ່ສົນໃຈກັບຄຳສອນ ທີ່ຖືກສອນຢູ່ເລື້ອຍໃນພຣະຄຳພີ. ເປັນເລື່ອງທີ່ໜ້າສົນໃຈທີ່ຈະຕ້ອງບັນທຶກເອົາໄວ້, ໜ້າສົນໃຈທີ່ຈະສັງເກດ ຄຳວ່າ "ບັບຕິສະມາ" ແມ່ນພົບເຫັນຢູ່ໃນຈົດໝາຍຂອງ ອຈ ໂປໂລ 16 ເທື່ອ. ຄຳວ່າ "ພິທີຕັດ" ແມ່ນພົບເຫັນ 41 ຄັ້ງໃນຈົດໝາຍຂອງໂປໂລ.ເປັນເລື່ອງແປກຫຼາຍ, ໃນຂະນະທີ່ການບັບຕິສະມາໄດ້ຖືກກ່າວວ່າ ເປັນເລື່ອງໃຫຍ່, ການຮັບພິທີຕັດແມ່ນບໍ່ຄ່ອຍຈະມີການກ່າວ ເຖິງປານໃດໃນໂບດຫຼາຍແຫ່ງ. (ຖ້າພວກເຮົາຈະຂະຫຍາຍເລື່ອງນີ້ອອກໄປນອກເໜືອຈາກຈົດໝາຍຂອງໂປໂລກັບພຣະຄຳພີທັງໝົດ, ມັນກໍຈະມີຄວາມແຕກຕ່າງກັນຫຼາຍກວ່າ ລະຫວ່າງການໃຊ້ຄວາມຖີ່ຂອງຄຳເຫຼົ່ານີ້ເລື່ອຍໆ.) ການທີ່ພວກເຮົາເຂົ້າໃຈສິ່ງທີ່ພຣະຄຳພີສອນກ່ຽວກັບພິທີຕັດແມ່ນສຳຄັນຫຼາຍ.

ຄຳສັນຍາຂອງພຣະເຈົ້າຕໍ່ອັບຣາຮາມ

ໃນປະຖົມມະການ 12: 1-3 ພຣະເຈົ້າໄດ້ເຮັດພັນທະສັນຍາ (ຫຼື ຄຳສັນຍາ) ກັບອັບຣາຮາມ. "ແລະເຮົາຈະເຮັດໃຫ້ເຈົ້າເປັນຊົນຊາດໃຫຍ່, ແລະ ເຮົາຈະອວຍພອນເຈົ້າ, ແລະ ເຮັດໃຫ້ຊື່ຂອງເຈົ້າຍິ່ງໃຫຍ່; ແລະ ເຈົ້າຈະເປັນພຣະພອນ" (ຂໍ້ທີ 2). ພຣະເຈົ້າໄດ້ສັນຍາຈະໃຫ້ດິນແດນ ແລະ ຊົນຊາດທີ່ຍິ່ງໃຫຍ່ໃຫ້ກັບອັບຣາຮາມ (ເບິ່ງປະຖົມມະການ 13:14-17). ຫຼັງຈາກເວລາຜ່ານໄປ ອັບຣາຮາມກໍເລີ່ມສົງໄສວ່າ ພຣະເຈົ້າຈະປະຕິບັດຄຳສັນຍານີ້ໄດ້ແນວໃດ ເພື່ອຈະໃຫ້ເກີດຊົນຊາດໃຫຍ່ໂດຍຜ່ານທາງເພິ່ນ. ເຈົ້າເຫັນບໍ່ວ່າອັບຣາຮາມກໍຍັງບໍ່ທັນມີລູກເລີຍ.

ອັບຣາຮາມຈະເປັນພໍ່ຂອງຊາດທີ່ຍິ່ງໃຫຍ່ໄດ້ແນວໃດໃນເມື່ອລາວຍັງບໍ່ມີລູກຈັກຄົນ? ສຸດທ້າຍ, ອັບຣາຮາມຄິດວ່າ ບາງທີພຣະເຈົ້າອາດຈະເອົາລູກຊາຍຂອງຄົນຮັບໃຊ້ເຮືອນຂອງອັບຣາຮາມ ໃຫ້ເປັນລູກຊາຍຕາມພຣະສັນຍາ ເພື່ອໃຫ້ເກີດຊົນຊາດທີ່ຍິ່ງໃຫຍ່ໄດ້. ເຖິງຢ່າງໃດກໍ່ຕາມ, ພະເຈົ້າປະຕິເສດແນວຄວາມຄິດນີ້ ແລະ ໄດ້ຮັບປະກັນກັບອັບຣາຮາມວ່າລູກຊາຍຂອງຮັບຣາຮາມຈະມາຜ່ານທາງ "ເຊື້ອສາຍຂອງເພິ່ນເອງ" (ປະຖົມມະການ 15: 1- 4). ຫຼາຍປີຜ່ານໄປ ແຕ່ອັບຣາຮາມ ແລະ ຊາຣາກໍຍັງບໍ່ມີລູກຊາຍ. ຈາກນັ້ນເຂົາເຈົ້າໄດ້ຄິດແຜນຂອງພວກເຂົາເອງເພື່ອເຮັດໃຫ້ພຣະສັນຍາຂອງພຣະເຈົ້າສຳເລັດ.ນາງຮາກາເປັນຍິງຮັບໃຊ້ຊາວເອຢິບທີ່ຢູ່ໃນເຮືອນຂອງອັບຣາຮາມ.ເນື່ອງຈາກນາງຊາຣາບໍ່ສາມາດມີລູກໄດ້. ເຂົາເຈົ້າຈຶ່ງຕົກລົງກັນວ່າ ອັບຣາຮາມຄວນມີລູກກັບນາງຮາກາ. ນາງຮາກາກໍໄດ້ເກີດລູກໃຫ້ກັບອັບຣາຮາມ,ແຕ່ພຣະເຈົ້າບໍ່ໄດ້ຍອມຮັບເລື່ອງນີ້ວ່າເປັນການປະຕິບັດໃຫ້ສຳເລັດຕາມພຣະສັນຍາຂອງພຣະອົງທີ່ມີຕໍ່ອັບຣາຮາມ (ປະຖົມມະການ 16: 1-4).

ພຣະສັນຍາສຳເລັດ

ອັບຣາຮາມມີອາຍຸໜຶ່ງຮ້ອຍປີ ແລະ ຊາຣາມີອາຍຸເກົ້າສິບ "ແລະ ພຣະຜູ້ເປັນເຈົ້າໄດ້ມາຢ້ຽມຢາມນາງຊາຣາຕາມທີ່ພຣະອົງຊົງກ່າວໄວ້, ແລະ ພຣະຜູ້ເປັນເຈົ້າໄດ້ກະທຳແກ່ນາງຊາຣາຕາມທີ່ໄດ້ກ່າວໄວ້. ນາງຊາຣາໄດ້ຕັ້ງທ້ອງ ແລະ ເກີດລູກຊາຍໃຫ້ອັບຣາຮາມ ໃນໄວແກ່ຊະລາຂອງເພິ່ນ ຕາມເວລາທີ່ພຣະເຈົ້າໄດ້ກຳນົດໄວ້ກັບເພິ່ນ" (ປະຖົມມະການ 21:1-2). ໃນໂຣມ 4:19 ໄດ້ກ່າວວ່າ ຮ່າງກາຍຂອງອັບຣາຮາມແມ່ນ "ຕາຍ" (ບໍ່ສາມາດສືບພັນໄດ້) ແລະ ມົດລູກຂອງຊາຣາກໍເຊັ່ນກັນ. ມັນເປັນໄປບໍ່ໄດ້ສຳລັບຄົນອາຍຸສູງຄືອັບຣາຮາມ ຫຼື ຊາຣາທີ່ຈະເຮັດໃຫ້ເດັກນ້ອຍເກີດມາໃນໂລກນີ້ໄດ້. ເຖິງແນວໃດກໍຕາມ, ພຣະເຈົ້າເຮັດໃນສິ່ງທີ່ເປັນໄປບໍ່ໄດ້! ພຣະອົງໄດ້ປະທານ ລູກຊາຍໃຫ້ກັບອັບຣາຮາມ ແລະ ຊາຣາໂດຍການອັດສະຈັນ. ເຮັດໃຫ້ຮ່າງກາຍຂອງພວກເຂົາ ສາມາດສືບພັນໄດ້ອີກຄັ້ງ. ພຣະເຈົ້າຈະບໍ່ຍອມຮັບຄວາມພະຍາຍາມຂອງອັບຣາຮາມ ແລະ ຊາຣາ ເພື່ອເຮັດໃຫ້ພຣະສັນຍາຂອງພຣະອົງສຳເລັດ (ຜ່ານການເກີດ ລູກແບບທຳມະຊາດ, ຈາກຄົນຮັບໃຊ້ ຫຼື ນາງ ຮາກາ).

ແທນທີ່ຈະເປັນແນວນັ້ນ, ພຣະອົງໄດ້ລໍຖ້າຈົນກວ່າເປັນໄປບໍ່ໄດ້ສຳລັບມະນຸດ ແລະ ຈາກນັ້ນ ພຣະອົງກໍໄດ້ເຮັດສຳເລັດພຣະສັນຍາຂອງພຣະອົງເອງ. ພຣະເຈົ້າປະຕິເສດລູກຊາຍຂອງຮາກາວ່າ ບໍ່ແມ່ນການເຮັດໃຫ້ພຣະສັນຍາຂອງພຣະອົງສຳເລັດ ເພາະວ່າລູກຊາຍຄົນນີ້ "ເກີດມາຕາມເນື້ອໜັງ" (ຄາລາເຕຍ 4:23). ພຣະອົງຍອມຮັບລູກຊາຍທີ່ນາງຊາຣາເກີດມາ ເພາະວ່າລູກຊາຍຜູ້ນີ້ແມ່ນເກີດ "ຕາມພຣະສັນຍາ" --- ເປັນການກະທຳຂອງພຣະເຈົ້າຢ່າງສົມບູນ (ຄາລາເຕຍ 4:23).

ສັນຍາລັກຂອງພັນທະສັນຍາຂອງພຣະເຈົ້າ

ສິ່ງທັງໝົດເຫຼົ່ານີ້ກ່ຽວຂ້ອງກັບການຮັບພິທີຕັດແນວໃດ? ໃນປະຖົມມະການ 17:9-14, ພຣະເຈົ້າບອກອັບຣາຮາມວ່າ ການຮັບພິທີຕັດຈະເປັນສັນຍາລັກຂອງພັນທະສັນຍາທີ່ພຣະອົງໄດ້ເຮັດໄວ້ກັບອັບຣາຮາມ. (ພິທີຕັດແມ່ນການຕັດໜັງອະໄວຍະວະເພດຂອງຜູ້ຊາຍ). ພຣະເຈົ້າບອກອັບຣາຮາມວ່າເດັກນ້ອຍຜູ້ຊາຍທຸກຄົນຈະຕ້ອງໄດ້ຮັບພິທີຕັດ. ອັບຣາຮາມໄດ້ຮຽນຮູ້ວ່າ ພຣະເຈົ້າບໍ່ຍອມຮັບເອົາ ການປະຕິບັດຂອງເນື້ອໜັງມະນຸດ, ມີພຽງແຕ່ສິ່ງທີ່ເກີດຂຶ້ນໂດຍຜ່ານທາງພັນທະສັນຍາຂອງພຣະອົງເທົ່ານັ້ນ. ການກະທຳຂອງພິທີຕັດ ແມ່ນເພື່ອເປັນການເຕືອນສະຕິຊາວຢິວ ເຖິງຄວາມຈິງນີ້. ພິທີຕັດໝາຍເຖິງຄວາມຕາຍ ຝ່າຍເນື້ອໜັງ --ເນື້ອໜັງບາງສ່ວນຖືກຕັດອອກ ແລະ ໂຍນຖິ້ມໄປຢ່າງໄຮ້ຄ່າ. ໃນລັກສະນະດຽວກັນ, ເນື້ອໜັງຂອງພວກເຮົາ(ຄວາມພະຍາຍາມຂອງມະນຸດ) ແມ່ນບໍ່ມີຄ່າ(ບໍ່ສາມາດເຮັດໃຫ້ພຣະເຈົ້າພໍໃຈໄດ້).ພວກເຮົາຕ້ອງດຳລົງຊີວິດດ້ວຍຄວາມເຊື່ອໃນ ພັນທະສັນ ຍາຂອງພຣະເຈົ້າ.

ພິທີຕັດຂອງພວກເຮົາ

ໃນພຣະຄຳພີເດີມ, ອິດສະຣາເອນຕ້ອງໃຫ້ຜູ້ຊາຍທຸກຄົນຮັບພິທີຕັດທາງຮ່າງກາຍ. ພວກເຮົາຍັງມີພິທີຕັດ. “ໃນພຣະອົງນັ້ນ ທ່ານທັງຫຼາຍ ໄດ້ຮັບ ພິທີຕັດແລ້ວ ຊຶ່ງບໍ່ແມ່ນເຮັດດ້ວຍມື,ໃນການຖອດຖິ້ມຮ່າງກາຍບາບຝ່າຍເນື້ອໜັງໂດຍການຮັບພິທີຕັດຂອງພຣະຄຣິດ" (ໂກໂລຊາຍ 2:11). ຖ້າພວກເຮົາປຽບທຽບເອເຟໂຊ 2:11 ກັບໂກໂລຊາຍ 2:11 ພວກເຮົາເຫັນວ່າ ຊາວອິດສະຣາເອນໄດ້ຮັບພິທີຕັດ“ດ້ວຍເນື້ອໜັງທີເຮັດດ້ວຍມື.”ໃນຂະນະທີ່ພວກເຮົາມີການຮັບພິທີຕັດໂດຍ“ບໍ່ແມ່ນເຮັດດ້ວຍມື”.ພິທີຕັດຂອງພວກເຮົາແມ່ນທາງ ຈິດວິນຍານ, ບໍ່ແມ່ນທາງຮ່າງກາຍ. ພິທີຕັດຂອງພວກເຮົາແມ່ນເຮັດໂດຍພຣະວິນຍານບໍລິສຸດ,ບໍ່ແມ່ນດ້ວຍມືມະນຸດ(ຜ່າຕັດ). ພິທີຕັດ ຂອງພວກເຮົາບໍ່ໄດ້ຕັດເນື້ອໜັງທາງຮ່າງກາຍອອກໄປ, ແຕ່ຖອດຖິ້ມ “ຮ່າງກາຍບາບຂອງເນື້ອໜັງ” ອອກໄປ. ຄົນທີ່ບໍ່ໄດ້ຮັບການ ໄຖ່ກໍຕາຍຝ່າຍຈິດວິນຍານ (ເອເຟໂຊ 2:1 ແລະ ເອເຟໂຊ 4:17-18); ຈິດວິນຍານທີ່ມືດມົນ (ໂຣມ 1:21 ແລະເຢເຣມີຢາ 17:9); ແລະ ຮ່າງກາຍບາບທີ່ຍັງມີຊີວິດ ແລະ ເຄື່ອນໄຫວຢູ່ (ໂຣມ 6: 6 ແລະ ໂຣມ 7:18). ຈິດວິນຍານ ທີ່ບໍ່ໄດ້ຮັບ ການໄຖ່ກໍຕິດມານຳຫຼືເຊື່ອມໂຍງເຂົ້າກັບຮ່າງກາຍບາບ ເພື່ອວ່າ ຄົນຜູ້ນັ້ນເປັນທາດຂອງບາບ (ໂຣມ 6:20). ເມື່ອພວກເຮົາ ໄດ້ຮັບຄວາມລອດພົ້ນ, ຈິດວິນຍານຂອງພວກເຮົາຖືກສ້າງຂຶ້ນໃໝ່ ຫຼື ໃຫ້ຊີວິດ (ຕີໂຕ 3:5) ແລະຈິດໃຈຂອງພວກເຮົາໄດ້ສະຫວ່າງຂຶ້ນ (2 ໂກລິນໂທ 4:3-6). ຮ່າງກາຍບາບຂອງພວກເຮົາແມ່ນໄດ້ຮັບພິທີຕັດ (ຕັດອອກຈາກຈິດໃຈຂອງພວກເຮົາ ---ເຂົ້າສູ່ຄວາມຕາຍ). ນີ້ໝາຍຄວາມວ່າ ພວກເຮົາບໍ່ເປັນທາດຂອງບາບອີກຕໍ່ໄປ,ແຕ່ມີອິດສະລະພາບທີ່ຈະຮັບໃຊ້ພຣະເຈົ້າ.

ຂໍໃຫ້ຈື່ສິ່ງນີ້

ມີສອງສິ່ງທີ່ພວກເຮົາຄວນຈື່ທຸກຄັ້ງທີ່ພວກເຮົາເຫັນຄຳວ່າ "ພິທີຕັດ" ໃນພຣະຄຳພີ. ສິ່ງທຳອິດແມ່ນຮ່າງກາຍບາບຂອງພວກເຮົາໄດ້ຮັບພິທີຕັດ ແລະ ຖືກປະຫານເສຍແລ້ວເພື່ອພວກເຮົາຈະບໍ່ເປັນທາດຂອງບາບອີກຕໍ່ໄປ.ພວກເຮົາຈະສຶກສາເລື່ອງນີ້ຕື່ມອີກໃນບົດຮຽນຕໍ່ໄປຂອງພວກເຮົາ.ບົດຮຽນທີສອງທີ່ພິທີຕັດສອນແມ່ນພົບຢູ່ໃນ ຟີລິບປອຍ 3:1-9."ເພາະວ່າພວກເຮົາຄືພວກຮັບພິທີຕັດແທ້, ເຊິ່ງນະມັດສະການພຣະເຈົ້າດ້ວຍຈິດວິນຍານ, ແລະ ຊື່ນຊົມຍິນດີໃນພຣະເຢຊູຄຣິດ, ແລະ ບໍ່ມີຄວາມຫມັ້ນໃຈໃນເນື້ອຫນັງ" (ຂໍ້ທີ 3). ໂປໂລກ່າວວ່າຄວາມພະຍາຍາມທາງສາສະໜາ ແລະ ຄວາມສຳເລັດຕ່າງໆ ຂອງລາວຖືວ່າ ບໍ່ມີຄ່າຫຍັງໝົດ. ບໍ່ມີຄວາມເຊື່ອ ຫຼືຄວາມໝັ້ນໃຈໃນຄວາມຊອບທຳຂອງຕົນເອງ, ແຕ່ແມ່ນ "ຄວາມຊອບທຳ ເຊິ່ງມາຈາກພຣະເຈົ້າໂດຍຄວາມເຊື່ອ" (ຂໍ້ທີ 9). ຄືກັນກັບພວກເຮົາໄດ້ຮັບຄວາມລອດພົ້ນໂດຍການຕາຍຂອງພຣະຄຣິດ ແລະບໍ່ແມ່ນການດີຂອງພວກເຮົາ, ໃນທຳນອງດຽວກັນນີ້ ພວກເຮົາຕ້ອງສືບຕໍ່ໄວ້ວາງໃຈໃນຄວາມຊອບທຳຂອງພຣະຄຣິດຫຼາຍກວ່າຄວາມພະຍາຍາມຂອງພວກເຮົາທີ່ຈະເປັນຄົນດີ.

ຄຳຖາມທົບທວນ ບົດຮຽນທີ 12 - ພິທີຕັດ

ຖືກ ຫຼື ຜິດ

1. ຫຼັກຄຳສອນຂອງພວກເຮົາ ແລະ ປະເພນີປະຕິບັດຂອງຄຣິສຕະຈັກຂອງພວກເຮົາຄວນກຳນົດວ່າ ແມ່ນຫຍັງຄືສິ່ງທີ່ພວກເຮົາເນັ້ນໜັກໃສ່ໃນການສອນຂອງພວກເຮົາ.
2. ຫຼັງຈາກ ພຣະເຈົ້າໄດ້ປະທານພັນທະສັນຍາໃຫ້ແລ້ວ, ອັບຣາຮາມກໍມີລູກຊາຍເລີຍ.
3. ການບັບຕິສະມາດ້ວຍນ້ຳເປັນເຄື່ອງໝາຍຂອງພັນທະສັນຍາຂອງພຣະເຈົ້າກັບອັບຣາຮາມ.
4. ຈິດວິນຍານຂອງຄົນທີ່ຍັງບໍ່ໄດ້ລອດພົ້ນແມ່ນຕາຍແລ້ວ.

ຄຳຖາມແບບປາລະໄນ

5. ຄຳວ່າ "ພິທີຕັດ" ໃນພຣະຄຳພີ:
   ກ) ມີຄວາມສຳຄັນໜ້ອຍຫຼາຍ
   ຂ) ຖືກພົບເຫັນຢູ່ໃນພຣະຄຳພີເດີມເທົ່ານັ້ນ
   ຄ) ເປັນການແປທີ່ບໍ່ດີ
   ງ) ຄວນເປັນການເຕືອນພວກເຮົາຄວາມຈິງທີ່ສຳຄັນສອງຢ່າງກ່ຽວກັບຊີວິດຝ່າຍຈິດວິນຍານຂອງພວກເຮົາ
6. ໃນປະຖົມມະການ 12:1-3, ພຣະເຈົ້າໄດ້ສ້າງພັນທະສັນຍາກັບອັບຣາຮາມ ແລະ:
   ກ) ສັນຍາວ່າ ພຣະຄຣິດຈະຕາຍແທນບາບກຳຂອງເພິ່ນ
   ຂ) ສັນຍາສຳລັບດິນແດນ ແລະ ຊົນຊາດທີ່ຍິ່ງໃຫຍ່
   ຄ) ເຕືອນອັບຣາຮາມວ່າ ພຣະເຈົ້າຈະສາບແຊ່ງລາວ ຖ້າລາວບໍ່ເຊື່ອຟັງ
   ງ) ລົ້ມເຫລວໃນການປະຕິບັດຕາມຄຳສັນຍາຂອງພຣະອົງ
7. ເມື່ອອັບຣາຮາມມີອາຍຸໜຶ່ງຮ້ອຍປີ ແລະ ຊາຣາມີອາຍຸເກົ້າສິບປີ:
   ກ) ອັບຣາຮາມໄດ້ອອກຈາກປະເທດຂອງຕົນ
   ຂ) ຊາຣາໄດ້ເກີດລູກຊາຍນ້ອຍຜູ້ໜຶ່ງ
   ຄ) ອັບຣາຮາມແຍກທາງກັບໂລດ
   ງ) ອັບຣາຮາມໄດ້ຕໍ່ສູ້ກັບບັນດາກະສັດຕ່າງໆ

ຕື່ມໃສ່ຊ່ອງຫວ່າງ

8. ໃນພັນທະສັນຍາເດີມ, ອິດສະຣາເອນໄດ້ຖືກກຳນົດໃຫ້______________________ແກ່ເດັກນ້ອຍຜູ້ຊາຍທຸກຄົນ.

9. ເມື່ອພວກເຮົາຖືວ່າ ເປັນຄົນຊອບທຳໂດຍຄວາມເຊື່ອແລ້ວ ຈິດວິນຍານຂອງພວກເຮົາກໍ________________.

10. ພິທີຕັດຄວນສອນພວກເຮົາວ່າ ບໍ່ໃຫ້ມີຄວາມໝັ້ນໃຈໃນ___________________.

ການສຶກສາຕໍ່ໄປ
ໂກໂລຊາຍ 1:13
ເອເຟໂຊ 2:19
ຕິໂຕ 2:14, ເອເຟໂຊ 2: 4,
ເອເຟໂຊ 5: 8
ເອເຟໂຊ 2: 6, ໂກໂລຊາຍ 3:10,
ຟີລິບປອຍ 2:13,
ເອເຟໂຊ 1: 3